**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ, ວັນທີ.......... 2023

# ບົດບັນທຶກຄວາມເຂົ້າໃຈວ່າດ້ວຍ ການຮ່ວມມື ຫັນເປັນດິຈິຕອນ ໃນວຽກງານໂຄສະນາອົບຮົມ

**ລະຫວ່າງ**

**ຄະນະໂຄສະນາອົບຮົມສູນກາງພັກ**

ມີສໍານັກງານຕັ້ງຢູ່ ບ້ານ: ສີວິໄລ ເມືອງ: ໄຊທານີ, ນະຄອນຫຼວງວຽງຈັນ, ສປປ ລາວ.

ໂທ: 021 413152 ແຟັກ: 021 413152

ຕໍ່ໄປນີ້ເອີ້ນວ່າ: " **ຝ່າຍ ກ** "

**ແລະ**

**ກະຊວງ ເຕັກໂນໂລຊີ ແລະ ການສື່ສານ**

ມີສໍານັກງານຕັ້ງຢູ່: ຖະໜົນລ້ານຊ້າງ, ເມືອງ: ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ,

ໂທ: 021 219 902, ແຟັກ: 021215877

ຕໍ່ໄປນີ້ເອີ້ນວ່າ: " **ຝ່າຍ ຂ** "

"**ຝ່າຍ ກ**" ແລະ "**ຝ່າຍ ຂ**" ເອີ້ນແຍກກັນວ່າ "**ແຕ່ລະຝ່າຍ**" ແລະ ເອີ້ນຮ່ວມກັນວ່າ "**ສອງຝ່າຍ**"

- ອີງຕາມການພົບປະ ລະຫວ່າງ ການນໍາຂອງຄະນະໂຄສະນາອົບຮົມສູນກາງພັກ ແລະ ການນໍາຂອງກະຊວງເຕັກໂນໂລຊີ ແລະ ການສື່ສານຄັ້ງວັນທີ 10 ພຶດສະພາ 2023.
- ອີງຕາມການແລກປ່ຽນບົດຮຽນ ແລະ ປຶກສາຫາລື ລະຫວ່າງ ກົມຂໍ້ມູນຂ່າວສານ ແລະ ຝຶກອົບຮົມ ຄະນະໂຄສະນາອົບຮົມສູນກາງພັກ ກັບ ສູນບໍລິຫານລັດດິຈິຕອນ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຄັ້ງວັນທີ 10 ພຶດສະພາ 2023.
- ອີງຕາມທິດຊີ້ນໍາ ຂອງ ການນໍາ ກະຊວງເຕັກໂນໂລຊີ ແລະ ການສື່ສານ ວ່າດ້ວຍການຮ່ວມມືສອງຝ່າຍ ລະຫວ່າງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ຄະນະໂຄສະນາອົບຮົມສູນກາງພັກໃນການຫັນວຽກງານໂຄສະນາອົບຮົມເປັນທັນສະໄໝ.

ເພື່ອຜັນຂະຫຍາຍການພົວພັນຮ່ວມມືລະຫວ່າງສອງຝ່າຍ ໄປສູ່ການຈັດຕັ້ງປະຕິບັດຕົວຈິງຕາມພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງແຕ່ລະຝ່າຍນັ້ນ, ທັງສອງຝ່າຍເຫັນດີປະຕິບັດຕາມເງື່ອນໄຂຕ່າງໆ ລຸ່ມນີ້:



สแกนด้วย CamScanner

**ມາດຕາ 1 ຈຸດປະສົງ**

ບົດບັນທຶກການຮ່ວມມືສະບັບນີ້ ສ້າງຂຶ້ນເພື່ອເປັນບ່ອນອີງໃຫ້ແກ່ການຮ່ວມມືຂອງທັງສອງຝ່າຍໃນການສ້າງການພົວພັນຮ່ວມມື ແລະ ກົນໄກປະສານງານ, ແລກປ່ຽນຂໍ້ມູນ ແລະ ການຫັນເປັນທັນສະໄໝທາງດ້ານຂໍ້ມູນຂ່າວສານ ເພື່ອສາມາດເຊື່ອມໂຍງບັນດາຂໍ້ມູນຕ່າງໆ ຢ່າງວ່ອງໄວ, ທັນເວລາ ພາຍໃນຄະນະໂຄສະນາອົບຮົມສູນກາງພັກ ແລະ ບັນດາກະຊວງ-ອົງການ ແຕ່ຂັ້ນສູນກາງຫາທ້ອງຖິ່ນ.

**ມາດຕາ 2 ຂອບເຂດການຮ່ວມມື**

1. ຮ່ວມມືກັນ ຫັນເປັນດີຈີຕອນ ວຽກງານການບໍລິຫານຫ້ອງການ ຂອງຄະນະໂຄສະນາອົບຮົມສູນກາງພັກ ໃຫ້ເປັນທັນສະໄໝ.
2. ຮ່ວມມືກັນ ນໍາໃຊ້ເຄື່ອງມືດີຈີຕອນ ເຂົ້າໃນວຽກງານໂຄສະນາອົບຮົມ, ເຜີຍແຜ່ນະໂຍບາຍ ແລະ ຂໍ້ມູນຂ່າວສານຕ່າງໆ ໃນຂອບເຂດທົ່ວປະເທດ.
3. ເພີ່ມທະວີການຮ່ວມມື ຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານລັດຖະກອນ, ແລກປ່ຽນຂໍ້ມູນຂ່າວສານ, ປະສົບການ, ກອງປະຊຸມປຶກສາຫາລື, ສໍາມະນາ, ຝຶກອົບຮົມ ແລະ ອື່ນໆ.

**ມາດຕາ 3 ຮູບແບບຂອງການຮ່ວມມື**

ເພື່ອບັນລຸຈຸດປະສົງຂອງບົດບັນທຶກຄວາມເຂົ້າໃຈ (MOU) ສະບັບນີ້, ຮູບແບບຂອງການຮ່ວມມືຂອງທັງສອງຝ່າຍ ຈະຖືກຈັດຕັ້ງປະຕິບັດ ດັ່ງຕໍ່ໄປນີ້:

1. ທັງສອງຝ່າຍ ຈະແຕ່ງຕັ້ງຄະນະ ເພື່ອຮັບຜິດຊອບ ແລະ ປະສານງານ ກັບອົງການຈັດຕັ້ງ ຫຼື ຄູ່ຮ່ວມມືຂອງທັງສອງຝ່າຍ ເພື່ອສົ່ງເສີມວຽກງານໃຫ້ສໍາເລັດຕາມເນື້ອໃນຈິດໃຈຂອງບົດບັນທຶກຄວາມເຂົ້າໃຈ (MOU) ສະບັບນີ້.

2. ທັງສອງຝ່າຍ ຈະຈັດກອງປະຊຸມຄະນະບໍລິຫານລະດັບສູງ ຕາມຄວາມຈໍາເປັນ ເພື່ອກໍານົດຫຼັກການຂອງການຮ່ວມມື, ການປະສານງານໃນດ້ານສໍາຄັນຕ່າງໆ ເພື່ອຮ່ວມກັນຊຸກຍູ້ຂະບວນການເຮັດວຽກທີ່ກ່ຽວຂ້ອງໃນແຕ່ລະໄລຍະ.

3. ກ່ຽວກັບ ງົບປະມານຮັບໃຊ້ ເພື່ອຈັດຕັ້ງປະຕິບັດ ບັນດາກິດຈະກໍາເຄື່ອນໄຫວຕ່າງໆ ຂອງ MOU ສະບັບນີ້ ຈະຕ້ອງໄດ້ຮັບການເຫັນດີເປັນເອກະພາບຂອງທັງສອງຝ່າຍ ເປັນແຕ່ລະກໍລະນີ ໂດຍຂຶ້ນກັບເງື່ອນໄຂການເງິນແລະແຫຼ່ງທຶນຕ່າງໆຂອງທັງສອງຝ່າຍ ເພື່ອໃຫ້ສໍາເລັດຕາມຈຸດປະສົງທີ່ວາງໄວ້.

**ມາດຕາ 4 ຄວາມຮັບຜິດຊອບ**

**ກ. ຄວາມຮັບຜິດຊອບຂອງ " ຝ່າຍ ກ " ພາຍຫລັງ ເຊັນ (MOU) ສະບັບນີ້ແລ້ວ ມີດັ່ງນີ້:**

1) ເຂົ້າຮ່ວມສຶກສາຄວາມເປັນໄປໄດ້ໃນການພັດທະນາລະບົບທີ່ທັນສະໄໝ ຂໍ້ມູນຂ່າວສານ ແລະ ການຫັນວຽກງານໂຄສະນາອົບຮົມເປັນທັນສະໄໝ ຮ່ວມກັບ ຝ່າຍ ຂ , ເຊິ່ງໄດ້ລະບຸໄວ້ໃນຂອບເຂດການຮ່ວມມື ໃນ ມາດຕາ 2, ເພື່ອຊຸກຍູ້ການປະຕິບັດໃຫ້ສໍາເລັດຕາມຈຸດປະສົງທີ່ວາງໄວ້;
2) ອໍານວຍຄວາມສະດວກດ້ານຕ່າງໆ ໃນການຫັນເປັນທັນສະໄໝທາງດ້ານຂໍ້ມູນຂ່າວສານ ພາຍໃນຄະນະໂຄສະນາອົບຮົມສູນກາງພັກ.
3) ເປັນເຈົ້າການ ແລະ ຊຸກຍູ້ສົ່ງເສີມການນໍາໃຊ້ບັນດາລະບົບບໍລິຫານ ແລະ ບໍລິການລັດຕ່າງໆທີ່ຝ່າຍ ຂ ສະໜອງໃຫ້, ຕອບສະໜອງຂໍ້ມູນຕ່າງໆ ທີ່ກ່ຽວພັນກັບການຫັນເປັນທັນສະໄໝທາງດ້ານຂໍ້ມູນຂ່າວສານ ໃນວຽກງານໂຄສະນາອົບຮົມ.



สแกนด้วย CamScanner

4) ເປັນເຈົ້າການປະສານສົມທົບດ້ານເຕັກນິກແລະ ເຂົ້າຮ່ວມກອງປະຊຸມວິຊາການ ກ່ຽວກັບການຫັນເປັນທັນສະໄໝທາງດ້ານຂໍ້ມູນຂ່າວສານ.

5) ຂື້ນແຜນໃນການຈັດກອງປະຊຸມສຳມະນາວຽກງານການຫັນເປັນທັນສະໄໝ ໃນຂົງເຂດໂຄສະນາອົບຮົມສູນກາງພັກ ຢູ່ພາຍໃນຄະນະໂຄສະນາອົບຮົມສູນກາງພັກ ແລະ ໃຫ້ບັນດາອົງການຈັດຕັ້ງພັກ-ລັດ ຕ່າງໆ.

6) ຝ່າຍ ກ ຈະແຕ່ງຕັ້ງຄະນະວິຊາການ ເພື່ອຮ່ວມເຮັດວຽກກັບ ຝ່າຍ ຂ.

**ຂ. ຄວາມຮັບຜິດຊອບຂອງ " ຝ່າຍ ຂ " ພາຍຫລັງ ເຊັນ (MOU) ສະບັບນີ້ແລ້ວ ມີດັ່ງນີ້:**

1) ຊຸກຍູ້ ສົ່ງເສີມ ການພັດທະນາ, ປັບປຸງລະບົບຕ່າງໆ ຂອງຄະນະໂຄສະນາອົບຮົມສູນກາງພັກ ໃຫ້ມີຄວາມທັນສະໄໝ ເປັນຕົ້ນແມ່ນ ສະໜອງບັນດາລະບົບບໍລິຫານລັດດີຈີຕອນ ທີ່ຈຳເປັນເພື່ອຍົກລະດັບການບໍລິຫານວຽກງານ ແລະ ຂໍ້ມູນຂ່າວສານໃຫ້ເປັນທັນສະໄໝພາຍໃນຄະນະໂຄສະນາອົບຮົມສູນກາງພັກ.

2) ຊ່ວຍສ້າງບຸກຄະລາກອນດ້ານໄອທີ ແລະ ຊຸກຍູ້, ສະໜັບສະໜູນ ຄະນະໂຄສະນາອົບຮົມສູນກາງພັກ ໃນການຈັດຕັ້ງປະຕິບັດກົນໄກການຫັນເປັນທັນສະໄໝທາງດ້ານຂໍ້ມູນຂ່າວສານ.

3) ປະສານສົມທົບ ແລະ ປະກອບບຸກຄາລະກອນໃນການນຳສະເໜີ ແລະ ຝຶກອົບຮົມວຽກງານການຫັນເປັນທັນສະໄໝ ຮ່ວມກັບຝ່າຍ ກ.

4) ຝ່າຍ ຂ ຈະແຕ່ງຕັ້ງຄະນະວິຊາການ ເພື່ອຮ່ວມເຮັດວຽກກັບ ຝ່າຍ ກ.

**ມາດຕາ 5 ການປ່ຽນແປງ, ດັດແກ້**

ການປ່ຽນແປງເນື້ອໃນບົດບັນທຶກຄວາມເຂົ້າໃຈ (MOU) ສະບັບນີ້ຈະຕ້ອງໄດ້ຮັບຄວາມເຫັນດີເປັນເອກະພາບຂອງທັງສອງຝ່າຍຢ່າງເປັນລາຍລັກອັກສອນຈະແຈ້ງ ແລະ ສອດຄ່ອງກັບກົດໝາຍຂອງ ສ ປປ ລາວ.

**ມາດຕາ 6 ຜົນສັກສິດ**

1. ບົດບັນທຶກສະບັບນີ້ ສ້າງຂຶ້ນ ໃນວັນທີ 14 ກັນຍາ 2023, ປະກອບມີ.....06......ມາດຕາ, ແລະ ມີຜົນບັງຄັບໃຊ້ເປັນເວລາ...02..ປີ ນັບແຕ່ມື້ທີ່ສອງຝ່າຍໄດ້ລົງລາຍເຊັນເປັນຕົ້ນໄປ ແລະ ສາມາດຕໍ່ອາຍຸ ໄດ້ບົນພື້ນຖານການປຶກສາຫາລື ແລະ ເຫັນດີເປັນເອກະພາບຮ່ວມກັນ.

2. ທັງສອງຝ່າຍເຫັນດີ ແຈ້ງການ, ແນະນຳ ແລະ ເຜີຍແຜ່ໃຫ້ພະນັກງານພາຍໃຕ້ຄວາມຮັບຜິດຊອບຂອງຕົນຮັບຊາບ ແລະ ປະຕິບັດບົດບັນທຶກການຮ່ວມມືນີ້.

3. ທັງສອງຝ່າຍເຫັນດີເຄົາລົບສິດ ແລະ ຈະປົກປ້ອງຂໍ້ມູນຕ່າງໆ ບໍ່ໃຫ້ຖືກເປີດເຜີຍແກ່ບຸກຄົນພາຍນອກ ພາຍໃຕ້ຂໍ້ກຳນົດຂອງບົດບັນທຶກການຮ່ວມມືສະບັບນີ້.

4. ບົດບັນທຶກສະບັບນີ້ສ້າງຂຶ້ນເປັນ 02 ສະບັບຕົ້ນ, ແຕ່ລະສະບັບລ້ວນແລ້ວແຕ່ມີຄຸນຄ່າ ແລະ ມີຜົນສັກສິດທາງດ້ານກົດໝາຍເທົ່າທຽມກັນ, ສອງຝ່າຍໄດ້ອ່ານ ແລະ ເຂົ້າໃຈເຫັນດີເປັນເອກະພາບຕໍ່ເນື້ອໃນຂອງບົດບັນທຶກສະບັບນີ້ໂດຍລະອຽດ ແລະ ພ້ອມກັນລົງລາຍເຊັນໄວ້ເພື່ອເປັນຫຼັກຖານ.



สแกนด้วย CamScanner

| ຄະນະໂຄສະນາອົບຮົມສູນກາງພັກ | ກະຊວງເຕັກໂນໂລຊີ ແລະ ການສື່ສານ |
| --- | --- |
| ໂດຍ: | ໂດຍ: |
| | |
| ທ່ານ ປອ ຄຳພັນ ເຜີຍຍະວົງ | ທ່ານ. ບັນດິດ. ສຈ. ບໍ່ວຽງຄຳ ວົງດາລາ |
| ຕຳແໜ່ງ : ເລຂາທິການສູນກາງພັກ,<br>ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ | ຕຳແໜ່ງ : ກຳມະການສູນກາງພັກ,<br>ລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ |

<u>ບ່ອນສົ່ງ:</u>

- ຄະນະນຳ ຄະນະໂຄສະນາອົບຮົມສູນກາງພັກ 1 ສະບັບ
- ຄະນະນຳ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ 1 ສະບັບ
- ບັນດາກົມທີ່ກ່ຽວຂ້ອງ 1 ສະບັບ
- ສຳເນົາ 1 ສະບັບ



สแกนด้วย CamScanner